ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----===000===-----

ກະຊວງການເງິນ

ເລກທີ: 694/ກງ---

ນະຄອນຫຼວງວຽງຈັນ, ວັນທີ: 06 MAR 2013

# ແຈ້ງການ

ເຖິງ : ອົງການຈັດຕັ້ງຂອງລັດ, ອົງການຈັດຕັ້ງສາກົນ, ບັນດາຫົວໜ່ວຍທຸລະກິດ, ບັນດາບຸກຄົນ, ນິຕິບຸກຄົນ ໃນຂອບເຂດທົ່ວປະເທດ.

ເລື່ອງ : ການນຳໃຊ້ສາລະບານອັດຕາພາສີລະບົບເອກະພາບ ລຸ້ນປີ 2012.

- ອີງຕາມ ກົດໝາຍວ່າດ້ວຍພາສີ ສະບັບເລກທີ 04/ສພຊ, ລົງວັນທີ 20 ທັນວາ 2011.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ, ສະບັບເລກທີ 08/ ນຍ, ລົງວັນທີ 10 ມັງກອນ 2013 ວ່າດ້ວຍການປະກາດໃຊ້ ສາລະບານອັດຕາພາສີລະບົບເອກະພາບ ລຸ້ນປີ 2012.

ເພື່ອຮັບປະກັນການຈັດຕັ້ງຜັນຂະຫຍາຍເນື້ອໃນ ດຳລັດວ່າດ້ວຍການປະກາດໃຊ້ ສາລະບານອັດຕາພາສີລະບົບເອກະພາບ ລຸ້ນປີ 2012 ໃຫ້ສອດຄ່ອງກັບລະບຽບການພາກພື້ນ, ສາກົນ ທີ່ ສປປ ລາວ ເຂົ້າເປັນພາຄີ ແນ່ໃສ່ເຮັດໃຫ້ການ ຈັດສິນຄ້າ, ເຄື່ອງຂອງ ເຂົ້າໃສ່ເລກລະຫັດໃຫ້ຖືກຕ້ອງຕາມທີ່ໄດ້ກຳນົດໄວ້ໃນ ປຶ້ມສາລະບານອັດຕາພາສີລະບົບເອກະພາບ ລຸ້ນປີ 2012 ດັ່ງນີ້:

1. ສາລະບານອັດຕາພາສີລະບົບເອກະພາບ ລຸ້ນປີ 2012 ປ່ຽນແທນສາລະບານອັດຕາພາສີລະບົບເອກະພາບ ລຸ້ນປີ 2007/1 ຊຶ່ງນຳໃຊ້ມາແຕ່ເດືອນ ພຶດສະພາ 2010.
2. ສຳລັບອັດຕາພາສີຂາເຂົ້າ ແມ່ນໃຫ້ປະຕິບັດຕາມອັດຕາປົກກະຕິ (MFN) ທີ່ໄດ້ກຳນົດໄວ້ໃນສາລະບານອັດຕາພາສີລະບົບເອກະພາບ ລຸ້ນປີ 2012.
3. ສາລະບານອັດຕາພາສີລະບົບເອກະພາບ ລຸ້ນປີ 2012 ປະກອບມີ: 21 ພາກ, 97 ໝວດ (ສ່ວນໝວດທີ 77 ຍັງບໍ່ທັນໄດ້ນຳໃຊ້ ແລະ ສະຫງວນໄວ້ສຳລັບບາງປະເພດ ສິນຄ້າໃນຕໍ່ໜ້າ) ແລະ ມີຈຳນວນລາຍການສິນຄ້າທັງໝົດ 9.558 ລາຍການ.
4. ສາລະບານອັດຕາພາສີລະບົບເອກະພາບ ລຸ້ນປີ 2012 ມີຜົນບັງຄັບໃຊ້ນັບແຕ່ວັນທີ 01 ເມສາ 2013 ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດ.

ລັດຖະມົນຕີວ່າການກະຊວງການເງິນ

ພູເພັດ ຄຳພູນວົງ